# ຄຳນຳ

## ບົດລາຍງານ ລະດັບປະເທດ ປີ 2008 ກ່ຽວກັບ ການເສີມສ້າງຄວາມກ້າວໜ້າ ທາງເສລີພາບ ແລະ ປະຊາທິປະໄຕ ປະຈຳປີ 2008

ອອກໂດຍ ຫ້ອງການເພື່ອປະຊາທິປະໄຕ, ສິດທິມະນຸດ, ແລະ ແຮງງານ ວັນທີ 23 ພຶດສະພາ 2008

ດັ່ງທີ່ທ່ານ ປະທານາທິບໍດີ ບຸສ ໄດ້ກ່າວໄວ້ວ່າ: "ເສລີພາບ ສາມາດຖືກຕໍ່ຕ້ານ, ແລະ ເສລີພາບ ສາມາດຖືກເຮັດໃຫ້ຊັກຊ້າໄດ້, ແຕ່ ເສລີພາບ ບໍ່ສາມາດຖືກປະຕິເສດໄດ້." ເທົ່າທີ່ທັງຊາຍ ແລະ ຍິງ ໃນບັນດາປະເທດທົ່ວໂລກ ບໍ່ສາມາດປະຕິບັດບັນດາ ເສລີພາບ ອັນພື້ນຖານ ຂອງ ພວກເຂົາເຈົ້າໄດ້ ໃນການເຊື່ອຖື, ການປາກເວົ້າ, ການຄົບຄ້າສະມາຄົມ ແລະ ການໂຮມຊຸມນຸມ, ພວກເຮົາ ຜູ້ທີ່ດຳລົງ ຢູ່ໃນເສລີພາບນີ້ ຕ້ອງເຮັດວຽກ ເພື່ອປົກປ້ອງ ແລະ ປັບປຸງໃຫ້ ຄຸນຄ່າທາງ ສິດທິມະນຸດ ແລະ ທາງ ປະຊາທິປະໄຕ ຢູ່ທົ່ວໂລກໃຫ້ມີຄວາມກ້າວໜ້າ.

ອີງຕາມ ກົດໝາຍ ວ່າດ້ວຍ ການເສີມສ້າງຄວາມກ້າວໜ້າ ຄຸນຄ່າດ້ານປະຊາທິປະໄຕ ປີ 2007, ກະຊວງການຕ່າງປະເທດ ໄດ້ກະກຽມບົດລາຍງານບົດນີ້ກ່ຽວກັບຄວາມພະຍາຍາມ ຂອງ ສະຫະລັດ ເພື່ອສົ່ງເສີມ ປະຊາທິປະໄຕ ແລະສິດທິມະນຸດ ໃນບັນດາປະເທດທີ່ບໍ່ມີປະຊາທິປະໄຕ ແລະ ບັນດາ ປະເທດ ທີ່ກຳລັງດຳເນີນການຂ້າມຜ່ານ ດ້ານປະຊາທິປະໄຕ ຢູ່ທົ່ວໂລກ. ກົດໝາຍ ສະບັບດັ່ງກ່າວ ຍັງເຈາະຈົງອີກຕໍ່ໄປວ່າພວກເຮົາສືບຕໍ່ການຮ່ວມມືຂອງພວກເຮົາກັບບັນດາກຸ່ມທີ່ບໍ່ຂຶ້ນກັບ ລັດຖະບານ ແລະ ສ່ວນບຸກຄົນ ເພື່ອເສີມສ້າງ ຫລັກການດ້ານ ສິດທິມະນຸດ ແລະ ປະຊາທິປະໄຕ. ທີ່ຈິງແລ້ວ,ການເປັນເພື່ອຮ່ວມງານອົງການຈັດຕັ້ງທີ່ບໍ່ຂຶ້ນກັບລັດຖະບານ–ເຜົ່າພື້ນເມືອງແລະ ອົງການຈັດຕັ້ງສາກົນແມ່ນຈຳເປັນຕໍ່ການພັດທະນາແລະຄວາມສຳເລັດຂອງສັງຄົມ ທີ່ເປັນອິດສະຫຼະ ແລະ ມີບົດບາດທີ່ສຳຄັນ ໃນການຮັບປະກັນຄວາມຮັບຜິດຊອບ ຂອງ ລັດຖະບານ ແລະ ການປ່ຽນແປງດ້ານປະຊາທິປະໄຕ.

ບົນການປຶກສາຫາລືກັບອົງການທີ່ບໍ່ຂຶ້ນກັບລັດຖະບານ, ແລະ ໃນການຮັກສາໄວ້ຊຶ່ງ ຄຳນິຍາມ ຂອງ ກົດໝາຍຂອງບັນດານປະເທດທີ່ບໍ່ແມ່ນປະຊາທິປະໄຕແລະກຳລັງຢູ່ໃນໄລຍະຂ້າມຜ່ານ ໄປສູ່ປະຊາທິປະໄຕ, ພວກເຮົາ ໄດ້ລາຍງານ ກ່ຽວກັບຄວາມພະຍາຍາມທີ່ເປັນບຸລິມະສິດ ຂອງ ຕົນ ໃນ 106 ປະເທດ.ບັນດາກິດຈະກຳສະເພາະຂອງພວກເຮົາໄດ້ຊີ້ໃຫ້ເຫັນແຈ້ງໃນບົດລາຍງານສະບັບນີ້ ກ່ຽວກັບໂຄງການຮ່ວມມືແບບສອງຝ່າຍ,ສາຍການທູດແບບເປີດເຜີຍ,ການລິເລີ່ມ

ຮ່ວມກັນແບບຫຼາຍຝ່າຍ, ການຮ່ວມມື ອົງການຈັດຕັ້ງສາກົນ ແລະ ອົງການຈັດຕັ້ງເຜົ່າພື້ນເມືອງ, ແລະບັນດາໂຄງການຊ່ວຍເຫລືອແມ່ນມີຄວາມຫມາຍເພື່ອເປັນຕົວຢ່າງ,ບໍ່ແມ່ນ ລະອຽດລະອໍ ເທື່ອ, ຂອງ ການດຳເນີນການທີ່ເຕັມຮູບແບບຂອງສະຫະລັດໃນດ້ານສິດທິມະນຸດ ແລະ ປະຊາທິປະໄຕ.

ດັ່ງທີ່ບົດລາຍງານສະແດງອອກ, ພວກເຮົາ ສຸມໃສ່ ຄວາມພະຍາຍາມ ຂອງ ຕົນ ໃນແນວທາງປະຕິບັດ ເພື່ອເສີມສ້າງ ບັນດາອົງປະກອບທີ່ເປັນແກ່ນສານ ທີ່ຈະຕ້ອງໄດ້ນຳສະເຫນີ ໃນຫຼາຍໆປະເທດໃນທົ່ວໂລກ ຖ້າບັນດາຫຼັກການດ້ານສິດທິມະນຸດ ແລະ ປະຊາທິປະໄຕ ກຳລັງຈະໄດ້ຮັບການປະຕິບັດ ແລະ ໄດ້ຮັບການປົກປ້ອງຢ່າງມີປະສິດທິຜົນ: (1) ການເລືອກຕັ້ງທີ່ເປັນອິດສະຫລະ ແລະ ຍຸດຕິທຳ, ດ້ວຍລະດັບສະຫນາມການຫລິ້ນ ເພື່ອຮັບປະກັນ ການແຂ່ງຂັນທີ່ແທ້ຈິງ; (2) ການປົກຄອງທີ່ດີ, ທີ່ມີຜູ້ແທນ, ມີຄວາມໂປ່ງໃສ, ແລະ ບັນດາສະຖາບັນທີ່ມີຄວາມຮັບຜິດຊອບເຄື່ອນໄຫວ ຢູ່ພາຍໃຕ້ລະບຽບກົດຫມາຍ, ຮວມທັງ ອຳນາດນິຕິບັນຍັດ ແລະ ຕຸລາການ ທີ່ເປັນເອກະລາດ; ແລະ (3) ບັນດາອົງການຈັດຕັ້ງສັງຄົມທີ່ແຂງແຮງ, ຮວມທັງ ຜູ້ປົກປ້ອງສິດທິມະນຸດ ແລະ ປະຊາທິປະໄຕ, ສື່ມວນຊົນທີ່ເປັນເອກະລາດ, ແລະ ກຳມະບານ.

ຈຸດປະສົງ ຂອງ ພວກເຮົາ ແມ່ນເພື່ອຂະຫຍາຍ ວົງຈອນແຫ່ງປະຊາທິປະໄຕ, ບັນດາລັດທີ່ມີການບໍລິຫານທີ່ດີ ທີ່ສັກກະລະບູຊາເສລີພາບພາຍໃຕ້ລະບຽບກົດຫມາຍ, ເຄົາລົບສິດທິ ແລະ ສະຫນອງຄວາມຕ້ອງການໃຫ້ແກ່ປະຊາຊົນຂອງຕົນ,ແລະກະທຳຢ່າງມີຄວາມຮັບຜິດຊອບ ໃນລະບົບສາກົນ. ສະຫະລັດ ບໍ່ສາມາດເຮັດແນວນີ້ໄດ້ ໃຫ້ນາໆປະເທດ. ຫລືວ່າພວກເຮົາຈະເຮັດບໍ່. ມັນຕ້ອງແມ່ນທາງເລືອກ ຂອງ ພວກເຂົາເຈົ້າເອງ ແລະ ການລິເລີ່ມ ຂອງ ພວກເຂົາເຈົ້າເອງ. ພວກເຮົາສາມາດຊ່ວຍໄດ້, ເຖິງຢ່າງໃດກໍຕາມ, ແລະ ພວກເຮົາ ກໍຕ້ອງຊ່ວຍ. ນີ້ແມ່ນການເປັນຮຸ້ນສ່ວນກັນ,ບໍ່ແມ່ນວິທີການປົກຄອງແບບຜູ້ເປັນພໍ່.ການເປັນຮຸ້ນສ່ວນກັນເພື່ອການປ່ຽນແປງທາງປະຊາທິປະໄຕ ທີ່ພວກເຮົາ ກຳລັງຜ່າຄື້ນຜ່າລົມ ກັບບັນດາລັດຖະບານ, ອົງການຈັດຕັ້ງທີ່ບໍ່ຂຶ້ນກັບລັດຖະບານ, ແລະ ຜູ້ທີ່ມີກຳລັງໃຈ ທັງຍິງ ແລະ ຊາຍ ຢູ່ທົ່ວໂລກ ກຳລັງຊ່ວຍສ້າງໂລກທີ່ມີອິດສະຫລະ, ປອດໄພ ສຳລັບຫມົດທຸກຄົນ.

ດ້ວຍຄວາມຄິດເຫລົ່ານີ້, ພວກເຮົາ ຈຶ່ງຍື່ນ ບົດລາຍງາຍ ກ່ຽວກັບການເສີມສ້າງຄວາມກ້າວຫນ້າທາງເສລີພາບ ແລະ ປະຊາທິປະໄຕ ປະຈຳເດືອນ ພຶດສະພາ 2008.

## ວິທີການຈັດແຈງ ບົດລາຍງານ ກ່ຽວກັບ ຄວາມກ້າວຫນ້າ ດ້ານເສລີພາບ ແລະ ປະຊາທິປະໄຕ

ບົດລາຍງານລະດັບປະເທດ ປະຈຳປີ 2008 ກ່ຽວກັບການເສີມສ້າງຄວາມກ້າວຫນ້າ ທາງເສລີພາບ ແລະ ປະຊາທິປະໄຕ 2008

ອອກໂດຍ ຫ້ອງການເພື່ອປະຊາທິປະໄຕ, ສິດທິມະນຸດ, ແລະ ແຮງງານ ວັນທີ 23 ພຶດສະພາ 2008

ບົດລາຍງານ ໄດ້ແບ່ງອອກເປັນສີ່ພາກ. ພາກທີຫນຶ່ງ ເປັນຂໍ້ຄວາມທີ່ຮັດກຸມ, ມີເນື້ອໃນຄືກັນກັບ ວັກທີຫນຶ່ງ ແລະ ວັກທີສອງ ໃນການນຳສະເຫນີ ໃນ *ບົດລາຍງານ ລະດັບປະເທດ ກ່ຽວກັບ ສິດທິມະນຸດ* ຂອງ ກະຊວງການຕ່າງປະເທດສະຫະລັດ ກ່ຽວກັບ ເງື່ອນໄຂທາງການເມືອງ ແລະ ສິດທິມະນຸດ ໃນແຕ່ລະປະເທດ. ພາກທີສອງ ແມ່ນຖະແຫລງການ ກ່ຽວກັບບຸລິມະສິດ ຂອງ ລັດຖະບານສະຫະລັດ ເພື່ອສົ່ງເສີມ ບັນດາຫລັກການ, ພາກປະຕິບັດ, ຄຸນຄ່າ ດ້ານປະຊາທິປະໄຕ ແລະ ສິດທິມະນຸດ. ມັນຍັງລວມທັງ ບັນດາການປະຕິບັດງານ ແລະ ກິດຈະກຳສະເພາະ, ທີ່ອາດຄາດຄະເນໄດ້, ທີ່ຈະໄດ້ໄດ້ຮັບການດຳເນີນ ແລະ ໄດ້ຮັບການອຸປະຖຳ ໂດຍທ່ານເອກອັກຄະລັດຖະທູດ ແລະ ບັນດາເຈົ້າຫນ້າທີ່ສະຫະລັດຄົນອື່ນໆ. ພາກທີສາມ ຊີ້ໃຫ້ເຫັນຈຸດເດັ່ນ ທີ່ມີຂອບເຂດກວ້າງຂວາງກວ່າ ກ່ຽວກັບ ການຊ່ວຍເຫລືອ ຫລັງການດຳເນີນການ ດ້ານປະຊາທິປະໄຕ, ທາງການທູດລະຫວ່າງປະເທດ, ການຊ່ວຍເຫລືອຈາກຕ່າງປະເທດ, ແລະ ການກະທຳອື່ນໆ ຂອງ ພາກລັດ ເພື່ອແກ້ໄຂ ບັນດາບຸລິມະສິດ ທີ່ໄດ້ລະບຸໄວ້ໃນພາກສອງ. ພາກທີສີ່ແມ່ນ ການສືບຕໍ່ ຂອງ ລາຍການລະອຽດ ຂອງ ບັນດາກິດຈະກຳຫລັງຈາກນັ້ນ ດັ່ງທີ່ພວກມັນກ່ຽວຂ້ອງກັບ ການສົ່ງເສີມ ສິດທິມະນຸດອັນເປັນພື້ນຖານທັງຫມົດ ແລະ ການປົກຄອງແບບ ປະຊາທິປະໄຕ ທີ່ບໍ່ໄດ້ຍົກຂຶ້ນມາໃນເມື່ອກ່ອນ.

---------------------------------------------

## ປະເທດລາວ

ບົດລາຍງານ ກ່ຽວກັບ ການເສີມສ້າງຄວາມກ້າວຫນ້າ ດ້ານເສລີພາບ ແລະ ປະຊາທິປະໄຕ ປະຈຳປີ 2008

ອອກໂດຍຫ້ອງການເພື່ອປະຊາທິປະໄຕ,ສິດທິມະນຸດ,ແລະແຮງງານ ວັນທີ 23 ພຶດສະພາ 2008

### ພາກທີ 1

ສາທາລະນະລັດ ປະຊາທະປະໄຕ ປະຊາຊົນລາວ ແມ່ນລັດທີ່ກຳອຳນາດດ້ວຍພັກດຽວ ປົກຄອງໂດຍ ພັກປະຊາຊົນ ປະຕິວັດລາວ. ບັນທຶກດ້ານ ສິດທິມະນຸດ ຂອງ ລັດໃນຂັ້ນສູນກາງ ໄດ້ຮັບການປັບປຸງ ເລັກນ້ອຍໃນຊຸມປີຜ່ານມາ, ແຕ່ການລະເມີດຕ່າງໆ ກໍໄດ້ເກີດຂຶ້ນເປັນປະຈຳ ຢູ່ຂັ້ນແຂວງ, ເມືອງ, ແລະ ບ້ານ. ລັດຖະບານໄດ້ສືບຕໍ່ ປະຕິເສດສິດທິ ຂອງ ພົນລະເມືອງ ໃນການປ່ຽນແປງລັດຖະບານ. ສະພາບຄ້າຍຄຸມຂັງ ແມ່ນກັນດານ ແລະ ເປັນເວລາທີ່ຊີວິດຕົກຢູ່ ໃນໄພຂົ່ມຂູ່.

ການສໍ້ລາດລາດບັງຫລວງ ໃນຖັນແຖວຕຳຫລວດ ແລະ ຕຸລາການຍັງປາກົດໃຫ້ເຫັນ ເລື້ອຍໆ. ລັດຖະບານໄດ້ລະເມີດ ກ່ຽວກັບສິດທິຂອງພົນລະເມືອງ ທີ່ມີຕໍ່ການເປັນສ່ວນຕົວ ແລະ ບໍ່ໄດ້ເຄົາລົບ ເສລີພາບ ດ້ານການປາກເວົ້າ, ອອກຂ່າວ, ການໂຮມຊຸມນຸມ, ຫລື ການຄົບຄ້າ ສະມາຄົມ. ສະນັ້ນ ກໍບໍ່ມີອົງການຈັດຕັ້ງທີ່ບໍ່ສັງກັດລັດດ້ານສິດທິມະນຸດຂັ້ນທ້ອງຖິ່ນ.ການຄ້າມະນຸດ,
ໂດຍລະເພາະແມ່ຍິງ ແລະ ເດັກນ້ອຍ ໄປເປັນໂສເພນີ, ຍັງຄົງເປັນບັນຫາເຮື້ອຮັງ ຄືດັ່ງທີ່ ໄດ້ເຮັດ ໃນການຈຳແນກ ຕ້ານກັບເຜົ່າສ່ວນນ້ອຍ ເຊັ່ນຊົນເຜົ່າມົ້ງ.ສິດທິ ຂອງ ຜູ້ອອກແຮງງານ ກໍຖືກຈຳກັດ. ລັດຖະທຳມະນູນກຳນົດວ່າເສລີພາບດ້ານສາສະໜາ;ເຖິງຢ່າງໃດກໍຕາມ,ເຈົ້າຫນ້າທີ່,
ໂດຍສະເພາະແມ່ນຢູ່ຊັ້ງທ້ອງຖິ່ນ, ຍັງມີການແຊກແຊງບັນຫານີ້ຢູ່.

## ພາກທີ 2

ໂດຍຜ່ານການມຸ່ງຫມາຍໃນຄວາມປະຍາຍາມທາງປະທິປະໄຕ, ທາງການທູດລະຫວ່າງປະເທດ, ແລະ ບັນດາໂຄງການຊ່ວຍເຫລືອດ້ານຕ່າງໆ, ລັດຖະບານສະຫະລັດ ກະຕຸ້ນລັດທະບານ ໃຫ້ສົ່ງ ເສີມ ລະບຽບກົດຫມາຍ ແລະ ການປົກຄອງທີ່ດີ, ຮວມທັງການປົກປ້ອງ ສິດທິຂອງທຸກຊົນເຜົ່າ ສ່ວນນ້ອຍ ແລະ ບັນດາກຸ່ມສາສະຫນາຕ່າງໆ ຢູ່ ສປປ ລາວ. ໂດຍສະເພາະ ມັນ ຮວມທັງ ການກົດດັນລັດຖະບານລາວ ເພື່ອໃຫ້ມີຄວາມໂປ່ງໃດເພີ່ມຂຶ້ນ ກ່ຽວກັບ ການແກ້ໄຂ ບັນຫາຕັ້ງ ຖິ່ນຖານ ຂອງ ເຜົ່າມົ້ງ ທີ່ມາຈາກປະເທດໄທ ແລະ ເຂດຫ່າງໄກສອກຫລີກ ພາຍໃນ ປະເທດ; ການໄປຢ້ຽມຢາມບ້ານເຜົ່າມົ້ງທີ່ໄດ້ຮັບການຕັ້ງຖິ່ນຖານໃຫມ່ ໃຫ້ເຂົ້າເຖິງ ຄວາມເປັນ ຢູ່ທີ່ດີ ຂອງ ພວກເຂົາເຈົ້າ; ການເດີນທາງໄປຕ່າງແຂວງ ເພື່ອເຂົ້າເຖິງ ສະພາບເງື່ອນໄຂຢູ່ພື້ນຖານ, ຮວມທັງ ສະພາບການດ້ານສິດທິມະນຸດ; ແລະ ພົບປະກັບບັນດາສະມາຊິກ ຂອງ ອົງການຈັດຕັ້ງສາກົນເປັນ ປະຈຳ ເພື່ອປຶກສາຫາລືກັນ ກ່ຽວກັບສະພາບການ ດ້ານສິດທິມະນຸດ.

ສະຖານທູດອຸປະຖຳ ຫໍສະຫມຸດ ແລະ ສະຖາບັນຕ່າງໆ 17 ແຫ່ງ ຢູ່ລາວ ເປັນໄລຍະໆ ດ້ວຍວາລະ ສານ ແລະ ປື້ມ, ໃຫ້ປະຊາຊົນໄດ້ເຂົ້າເຖິງ ຂ່າວສາກົນ ແລະ ສື່ມວນຊົນຕາເວັນຕົກ. ການຈະລາ ຈອນທາງອິນເຕີແນັດ ບົນແວັບໄຊ ຂອງ ສະຖານທູດພວກເຮົາ, ຊຶ່ງຮວມທັງ ການເຊື່ອມຕໍ່ໄປຍັງ ບົດ ລາຍງານ ຂອງ ກະຊວງການຕ່າງປະເທດ ຂອງ ສະຫະລັດ ແລະ ຂໍ້ມູນອື່ນໆ ຂອງ ລັດຖະບານ ສະຫະລັດນຳອີກ, ມີເຖິງ160 ສ່ວນຮ້ອຍ ຈາກປີ 2006. ສະຖານທູດໄດ້ສະຫນອງ ຂໍ້ມູນທັງພາສາ ອັງກິດ ແລະ ພາສາລາວ ກ່ຽວກັບພາກປະຕິບັດ ແລະ ບັນທັດຖານສາກົນ ໃນຂົງເຂດ ດ້ານສິດທິ ມະນຸດ ແລະ ປະຊາທິປະໄຕ ໃຫ້ແກ່ບັນດານັກສຶກສາມະຫາວິທະຍາໄລ ແລະ ປະຊາຊົນ ທົ່ວໄປ. ເພື່ອລະນຶກເຖິງວັນ ແຫ່ງ ເສລີພາບດ້ານສື່ມວນຊົນໂລກ 2007, ເຈົ້າຫນ້າທີ່ສະຫະລັດ ໄດ້ສົນທະ ນາກ່ຽວກັບເສລີພາບໃນການອອກຂ່າວ ຢູ່ສະຫະລັດ, ຮວມທັງການຮັບປະກັນ ເສລີພາບ ດ້ານສື່

ມວນຊົນ ທີ່ໄດ້ຮັບການຊຸກຍູ້ກາລະບູຊາ ໃນການດັດແກ້ຄັ້ງທຳອິດ, ດ້ວຍບັນດາກຸ່ມນັກສຶກສາວິທະຍາໄລ ທີ່ສູນລາວ-ອາເມລິກາ ໃນວັນທີ 2 ພຶດສະພາ. ເຈົ້າໜ້າທີ່ສະຫະລັດ ໄດ້ນຳໃຊ້ ໂຄງການ ການໄປຢ້ຽມຢາມສະຫະລັດ ຂອງບັນດາຜູ້ນຳສາກົນ ເພື່ອສົ່ງເສີມສິດທິມະນຸດ, ກຳລັງໃຫ້ການອຸປະຖຳ ການໄປຢ້ຽມຢາມ ສະຫະລັດ ຂອງ ເຈົ້າໜ້າທີ່ລາວໃນປີ 2007 ເພື່ອ ສຶກສາແງ່ມຸມຕ່າງໆ ກ່ຽວກັບ ລະບົບຕຸລາການ ຂອງ ສະຫະລັດ ແລະ ການສະເໜີຂ່າວແບບ ສືບສວນສອບສວນ, ທີ່ຮວມຢູ່ໃນບັນດາຫົວຂໍ້ອື່ນໆ. ສະຖານທູດໃຫ້ບຸລິມະສິດ ຜູ້ທີ່ໄດ້ຮັບສະເໜີຊື່ ຄັດເລືອກ ໄປຢ້ຽມຢາມ ສະຫະລັດ ສຳລັບລາຍການຕ່າງໆ ໃນນະໂຍບາຍການຕ່າງປະເທດ ຂອງ ສະຫະລັດ, ປະເດັນບັນຫາດ້ານສິດທິມະນຸດ, ແລະ ໂຄງການຕ້ານການຄ້າມະນຸດ. ສະຖານທູດ ໄດ້ເປັນເຈົ້າພາບຈັດສຳມະນາຫລາຍຄັ້ງ ເພື່ອໃຫ້ບົດຮຽນແກ່ພະນັກງານ ຂອງລັດຖະບານລາວ, ສະພາແຫ່ງຊາດ, ມະຫາວິທະຍາໄລແຫ່ງຊາດ, ແລະ ບັນດາສະຖາບັນຄົ້ນຄວ້າ ເພື່ອທຳການຄົ້ນຄວ້າ ກ່ຽວກັບປະເດັນທາງກົດໝາຍ ແລະ ຕຸລາການ ໂດຍນຳໃຊ້ອິນເຕີແນັດ.

## ພາກທີ 3

ອະດີດເອກອັກຄະລັດຖະທູດໃຫຍ່ເພື່ອເສລີພາບ ດ້ານສາສະໜາ ໄດ້ມາຢ້ຽມຢາມປະເທດລາວເພື່ອຍົກບັນຫາຄວາມກັງວົນ ດ້ານສິດທິມະນຸດ ແລະ ເສລີພາບ ດ້ານສາສະໜາ ແບບກວ້າງຂວາງ ໂດຍກົງກັບບັນດາຜູ້ນຳທີ່ສຳຄັນ ຂອງ ລາວ ຕະຫລອດໄລຍະເວລາ ຂອງ ການຢ້ຽມຢາມ ໃນລະຫວ່າງວັນທີ 14-17 ມັງກອນ. ອະດີດເອກອັກຄະລັດຖະທູດໃຫຍ່ ຍັງໄດ້ຊີ້ໃຫ້ເຫັນແຈ້ງອີກ ໃນຄວາມຕ້ອງການທີ່ຈະຂະຫຍາຍ ການປົກປ້ອງ ເສລີພາບ ດ້ານສາສະໜາ ໃຫ້ແກ່ເຂດຊົນນະບົດ ໃນເວລາປາໄສຕໍ່ ບັນດາເຈົ້າໜ້າທີ່ ໃນກຸ່ມໃຫຍ່ ໃນການປາຖະກະຖາ ທີ່ສະຖາບັນ ການຕ່າງປະເທດ. ຄະນະຜູ້ແທນພະນັກງານ ຈາກກຳມາທິການ ພົວພັນຕ່າງປະເທດ ຂອງ ວຸດທິສະພາ ແລະ ກຳມາທິການດ້ານງົບປະມານ ຍັງໄດ້ຍົກປະເດັນບັນຫາດ້ານ ສິດທິມະນຸດ, ຮວມທັງ ຄວາມຕ້ອງການ ສຳລັບ ຄວາມໂປ່ງໃສທີ່ກວ້າງຂວາງກວ່າ ຂອງ ລັດຖະບານ ຕະຫລອດໄລຍະ ຂອງ ການຢ້ຽມຢາມ. ສາດສະດາຈານ ດ້ານວິທະຍາສາດທາງການເມືອງ ຂອງ ສະຫະລັດ ສອງທ່ານ ໄດ້ມາຢ້ຽມຢາມລາວ ໃນເດືອນຕຸລາ ແລະ ໄດ້ນຳໜ້າໂຄງການ ທີ່ສຸມໃສ່ "ບັນດາສະຖາບັນດ້ານ ສິດທິມະນຸດ ແລະ ລັດຖະບານແບບສົມທຽບ." ບັນດາທ່ານສາດສະດາຈານໄດ້ໂອ້ລົມກັບບັນດາເຈົ້າໜ້າທີ່ ຂອງ ລາວປະມານ 60 ທ່ານ ທີ່ມາຈາກຫລາຍກະຊວງ ແລະ ສະຖາບັນ, ບັນດານັກສຶກສາ ມະຫາວິທະຍາໄລແຫ່ງຊາດລາວ 70 ຄົນ ທີ່ສະຖາບັນການຕ່າງປະເທດ, ແລະ ບັນດາຜູ້ຕາງໜ້າອາວຸໂສ ຂອງ ກະຊວງຕ່າງໆ, ກ່ຽວກັບສະຖາບັນດ້ານສິດທິມະນຸດ ສາກົນ ແລະ ບັນດາໂຄງປະກອບສ້າງ ຂອງ ລັດຖະບານທີ່ແຕກຕ່າງກັນ ໃນຊາດຕ່າງໆໃນໂລກ. ໜຶ່ງໃນບັນດາ ບົດສະເໜີ ໄດ້ສຸມໃສ່ "ບັນດາສະຖາບັນດ້ານ ສິດທິມະນຸດ: ການສົມທຽບກຳມະການຕັດສິນ ຍຸຕິທຳ."

ຕະຫລອດໄລຍະການຢ້ຽມຢາມ ຂອງ ພວກເຂົາເຈົ້າ, ສາດສະດາຈານສອງທ່ານດັ່ງກ່າວ ໄດ້ເຮັດການສົນທະນາ ແບບໂຕະມົນດ້ານສະຖາບັນດ້ານສິດທິມະນຸດ, ກຳມະການຕັດສິນຍຸດຕິທຳ, ແລະໂຄງສ້າງທາງກົດຫມາຍ ຢູ່ລາວ ກັບບັນດາເຈົ້າຫນ້າທີ່ ຈາກກະຊວງການຕ່າງປະເທດ, ຄະນະນິຕິສາດ, ອົງການໄອຍະການ, ສານປະຊາຊົນສູງສຸດ, ແລະ ສະພາແຫ່ງຊາດ. ບັນດາບົດ ສະເຫນີຂອງ ບັນດາສາດສະດາຈານດັ່ງກ່າວ ສາມາດເອົາໄດ້ ຈາກແວັບໄຊ ຂອງ ພວກເຮົາ ເພື່ອໃຫ້ຜູ້ອ່ານໃນວົງກວ້າງຂວາງກວ່າໃນປເທດສາມາດເຂົ້າໄປອ່ານໄດ້.

## ພາກທີ 4

ສະຖານທູດ, ໃນການສົມທົບກັບ ກອງເລຂາ ຂອງ ຄະນະກຳມະການແຫ່ງຊາດ ເພື່ອຊີ້ນຳດ້ານການຕ້ານກັບການຄ້າມະນຸດ, ໄດ້ເປັນເຈົ້າພາບໃນໂຄງການອັນສຳຄັນໂຄງການຫນຶ່ງ ໃນລະຫວ່າງວັນທີ 11-20 ມິຖຸນາ ກ່ຽວກັບ ການຄ້າມະນຸດ ພາຍໃນປະເທດ. ທ່ານ ສາດສະດາຈານສະຫະລັດທ່ານຫນຶ່ງ ໄດ້ເປັນຜູ້ນຳຫນ້າໃນການຈັດກອງປະຊຸມປຶກສາຫາລື ແບບຕໍ່ເນື່ອງ, ການຂຶ້ນບັນລະຍາຍ, ແລະ ການສົນທະນາແບບໂຕະມົນ ໃນປະເດັນບັນຫາ ການຄ້າມະນຸດ ໃຫ້ແກ່ບັນດາຜູ້ຟັງທັງຫມົດຫລາຍກວ່າ 150 ທ່ານ ທີ່ມາຈາກລັດຖະບານ, ຜູ້ນຳອົງການຈັດຕັ້ງບໍ່ຂຶ້ນກັບລັດຖະບານ, ແລະ ບັນດານັກສຶກສາ. ທີ່ກອງປະຊຸມປຶກສາຫາລື, ທ່ານ ສາດສະດາຈານ ໄດ້ທົບທວນຄືນ ກ່ຽວກັບບັນດານິຍາມ ທີ່ສາກົນຍອມຮັບໄດ້ ກ່ຽວກັບ ການຄ້າມະນຸດ ແລະ ໄດ້ອະທິບາຍ ເຖິງບັນດາສາເຫດ ຂອງ ການບໍ່ມີຄວາມຢຸດນິ້ງ, ແລະ ຜົນກະທົບ ຂອງ ການຄ້າມະນຸດ ບົນສ່ວນບຸກຄົນ ແລະຊຸມຊົນຕ່າງໆ. ກອງປະຊຸມປຶກສາຫາລື ຢູ່ວຽງຈັນ ແລະ ສະຫວັນນະເຂດ ໄດ້ດຶງດູດຄວາມສົນໃຈຈາກຄະນະກຳມະການແຫ່ງຊາດ ເພື່ອຊີ້ນຳດ້ານການຕ້ານກັບການຄ້າມະນຸດ; ກະຊວງການຕ່າງປະເທດ, ກະຊວງປ້ອງກັນຄວາມສະຫງົບ, ແລະ ກະຊວງແຮງງານ ແລະ ສະຫວັດດີການສັງຄົມ; ສະຫະພັນແມ່ຍິງລາວ; ອົງການຊາວຫນຸ່ມ; ແລະ ອົງການອື່ນໆ.

ສະຫະລັດອາເມລິກາ ໄດ້ເນັ້ນລັດຖະບານຢ່າງສະຫມໍ່າສະເຫມີ ໃຫ້ອະນຸຍາດ ໃນການພັດທະນາອົງການຈັດຕັ້ງສັງຄົມ ແລະ ອົງການຈັດຕັ້ງທີ່ບໍ່ຂຶ້ນກັບລັດຖະບານ ພາຍໃນປະເທດ. ໃນປີ 2007, ສະຖານທູດໄດ້ດຳເນີນການ ໂຄງການໃຫຍ່ໂຄງການຫນຶ່ງ ເພື່ອແປບັນດາກົດຫມາຍລາວ ເປັນພາສາອັງກິດ ແລະ ກົດຫມາຍສາກົນ ຈາກທັງພາສາອັງກິດ ແລະ ຝຣັ່ງ ເປັນພາສາລາວ. ການເຂົ້າເຖິງທີ່ຍິ່ງໃຫຍ່ກວ່ານີ້ ຕໍ່ກົດຫມາຍສາກົນທີ່ກວ້າງຂວາງ ແມ່ນຖືກອອກແບບມາເພື່ອຊ່ວຍ ບັນດາສະມາຊິກ ຂອງ ສະພາແຫ່ງຊາດ, ແລະ ບັນດາສະມາຊິກ ຂອງ ສະພາທະນາຍຄວາມ ແລະ ບັນດາສະຖາບັນກົດຫມາຍພາຍໃນປະເທດ ໃຫ້ເຂົ້າໃຈຫລາຍຂຶ້ນ ກ່ຽວກັບບັນດາບັນທັດຖານ ທີ່ສາກົນຍອມຮັບໄດ້ ຂອງ ກົດຫມາຍສາກົນ. ການສົ່ງເສີມການປົກຄອງທີ່ດີ ແມ່ນອົງປະກອບ ທີ່ສຳຄັນທີ່

ສຸດ ແຫ່ງຄວາມພະຍາຍາມ ຂອງ ລັດຖະບານສະຫະລັດ ເພື່ອສະຫນັບສະຫນູນ ປະຊາ ທິປະໄຕ ແລະ ສິດທິມະນຸດ. ລັດຖະບານສະຫະລັດໃຫ້ທຶນ ແກ່ໂຄງການທີ່ ກຳລັງເຮັດວຽກ ເພື່ອ ເສີມສ້າງ ຄວາມເຂັ້ມແຂງ ໃຫ້ແກ່ການເປັນຜູ້ນຳ ຂອງ ເພດຍິງ ໂດຍການກະຕຸກຊຸກຍູ້ ຄວາມມີສະຕິ ລະວັງ ຕົວໃນສັງຄົມ ຂອງ ຄຸນຄ່າແຫ່ງການເປັນຜູ້ຍິງ ທີ່ນຳມາສູ່ລັດຖະບານ, ການກະຕຸ້ນຄວາມ ຕ້ອງການ ເພື່ອສົ່ງເສີມການຕັດສິນໃຈ ທີ່ມີຄວາມຮັບຜິດຊອບ ແລະ ມີການພິຈາລະນາຕໍ່ແມ່ຍິງ, ແລະ ສະຫນອງການຝຶກອົບຮົມ ເພື່ອຍົກສູງຄວາມອາດສາມາດ ຂອງ ແມ່ຍິງ ເພື່ອເຮັດໃຫ້ການວາງ ນະໂຍບາຍເປັນຮູບເປັນຮ່າງ ແລະ ມີຜົນໄດ້ຮັບ. ອີກໂຄງການຫນຶ່ງທີ່ ລັດຖະບານສະຫະລັດ ໄດ້ໃຫ້ການອຸປະຖຳ ເພື່ອຫາທາງຍົກລະດັບຊີວິດການເປັນຢູ່ ຂອງ ແມ່ຍິງ ຢູ່ພາກເຫນືອ ຂອງ ລາວ ໃຫ້ດີຂຶ້ນ ແລະ ຍັງພະຍາຍາມ ຂະຫຍາຍບົດບາດ ຂອງ ແມ່ຍິງ ໃນການຕັດສິນບັນຫາ ຂອງ ຊຸມຊົນ.

ລັດຖະບານສະຫະລັດ ຍັງຊຸກຍູ້ມໃຫ້ແນວລາວສ້າງຊາດ, ກະໂຕລັດຖະບານ ໃນການດູແລບັນຫາ ດ້ານສາສະຫນາ, ເພື່ອແກ້ໄຂບັນຫາການລະເມີດດ້ານສາສະຫນາ ໂດຍ ເຈົ້າຫນ້າທີ່ ຊັ້ງທ້ອງຖິ່ນ. ເຈົ້າຫນ້າທີ່ສະຫະລັດ ໄດ້ຫນູນໃຊ້ສາຍພົວພັນໃນການເຮັດວຽກຮ່ວມກັນ ກັບເຈົ້າຫນ້າທີ່ ຂອງ ລັດຖະບານ ຂັ້ນທ້ອງຖິ່ນ ແລະ ຂັ້ນສູນກາງ ເພື່ອນຳເອົາກໍລະນີເຫລົ່ານີ້ ມາໃຫ້ບັນດາເຈົ້າຫນ້າທີ່ ກ່ຽວຂ້ອງເອົາໃຈໃສ່, ຊຶ່ງປົກປະຕິແລ້ວ ມັກຈະເຫັນຜົນ ໃນການແກ້ໄຂບັນຫາທີ່ໄວວາ. ລັດຖະ ບານສະຫະລັດ ຍົກໃຫ້ລັດຖະບານລາວເຫັນໄດ້ ຊຶ່ງຄວາມຕ້ອງການ ໃຫ້ມີການອະນຸຍາດໃຫ້ແກ່ ການຕິດຕາມກວດກາ ຂອງ ສາກົນ ຕໍ່ລະບົບຄ້າຍຄຸມຂັງ. ເຈົ້າຫນ້າທີ່ສະຫະລັດ ພົບປະກັບ ສະມາຊິກ ຂອງ ອົງການຈັດຕັ້ງສາກົນ ເປັນປະຈຳ ແລະ ກັບບັນດາສະຖານທູດທີ່ກ່ຽວຂ້ອງ ເພື່ອ ສົນທະນາ ກ່ຽວກັບຍຸດທະສາດ ເພື່ອໂນ້ມນ້າວລັດຖະບານໃຫ້ເປີດລະບົບຄ້າຍຄຸມຂັງ ໃຫ້ ທາງນອກໄດ້ ມີການຕິດຕາມກວດກາ. ລັດຖະບານສະຫະລັດ ຍັງໄດ້ຕິດຕາມຢ່າງໃກ້ຊິດ ຕໍ່ບັນ ດາກໍລະນີນັກໂທດທາງການເມືອງທີ່ເປັນທີ່ຮູ້ຈັກດີ,ໂດຍການນຳໃຊ້ການພົບປະກັບບັນດາເຈົ້າ ຫນ້າທີ່ ເພື່ອຍົກຄວາມກັງວົນ ຂອງ ຕົນ ກັບລັດຖະບານ.